# ພຣະຣາຊສານພອນປີໃໝ່
# ຂອງສະເດັດເຈົ້າຟ້າຊາຍ ໂສຣິຍະວົງສ໌ ສວ່າງ

ອົງຄ໌ປະທານ ແຫ່ງພຣະຍາດຕິວົງສ໌ ຣາຊວົງສ໌ ລ້ານຊ້າງຮົ່ມຂາວ

ໃນໂອກາດພິທີຖວາຍພິທີພຣະຣາຊບາສີຫຼວງ

ວັນອາທິດ ວັນທີ ໒໐ ເມສາ ໒໐໐໘ ທີ່ ບູຊີ ແຊງຊອກ

ທ່ານພະຍາ ພະນະທ່ານ ເຖົ້າແກ່ ຣາກບ້ານຮາກເມືອງ
ທ່ານປະທານ ສະມາຄົມ
ທ່ານຜູ້ມີກຽດ ພີ່ນ້ອງຮ່ວມຊາດ ທຸກໆເຜົ່າ ທີ່ ຮັກແພງ ແລະ ນັບຖື

ຂ້າພະເຈົ້າ ໃນນາມ ຜູ້ສຳເຣັດຣາຊການແຜ່ນດິນ ຕາງພະເນດພະກັນຂອງພຣະບາດສົມເດັດພຣະເຈົ້າມະຫາຊີວິດລາວ ແລະ ໃນນາມປະທານ ແຫ່ງ ພຣະຍາດຕິວົງສ໌ ຣາຊວົງສ໌ ລ້ານຊ້າງຮົ່ມຂາວ ແລະ ພຣະຊາຍາ ພ້ອມດ້ວຍ ພຣະຍາດຕິວົງສ໌ ທຸກໆອົງຄ໌
ຂໍສແດງຄວາມໂສມມະນັສ ປາບປື້ມປີຕິຍິນດີ ເປັນຢ່າງທີ່ສຸດ ທີ່ພວກທ່ານທັງຫຼາຍ ປະກອບໂດຍ ໑ໆ ສະມາຄົມ ແລະ ລາວເຮົາທຸກໆເຜົ່າ ຍັງຍຶດໝັ້ນໃນວັທນະທັມ ຮີດເກົ່າຄອງຫຼັງ ປະເພນີອັນດີງາມຂອງລາວເຮົາ ໂດຍໄດ້ນຳທູນຖວາຍ ຊຶ່ງພາພຣະຣາຊບາສີຫຼວງ ແລະ ໄດ້ຖວາຍ ພຣະພອນໄຊຍະຄາຖາມົງຄຸນ ນຳໂດຍ ທ່ານພາມມະນາມະຫາຣາຊຄູ.
ຂ້າພະເຈົ້າ ຂໍນ້ອມຮັບເອົາ ພາພຣະຣາຊບາສີຫຼວງນີ້ ແລະ ຂໍຂອບໃຈນຳພວກທ່ານ ຢ່າງເລີກຊຶ້ງ.
ຂ້າພະເຈົ້າ ມີຄວາມພາກພູມໃຈເປັນພິເສດ ທີ່ໄດ້ເຫັນວ່າ ຊາວໜຸ່ມລາວ ທີ່ໄດ້ເກີດ ຫຼື ໄດ້ມະໃຫຍ່ຢູ່ນອກປະເທດໃຫ້ຄວາມສົນໃຈຢາກຮູ້ຢາກເຫັນ ສີລປະ ວັທນະທັມ ປະເພນີລາວເຮົາ ໂດຍສະເພາະໃນມື້ນີ້ ກໍ່ແມ່ນພິທີພຣະຣາຊບາສີຫຼວງ.

ເປັນຫຍັງ ຢູ່ໃນພຣະຣາຊອານາຈັກລາວ ຈຶ່ງມີພິທີພຣາຣາຊບາສີຫຼວງ ຖວາຍພຣະບາດສົມເດັດພຣະເຈົ້າມະຫາຊີວິດ ແລະ ອົງຄ໌ອັກຄະມະເຫສີ ທຸກໆປີ ?
ພິທີນີ້ ແມ່ນການເປີດໂອກາດ ໃຫ້ບັນດາຜູ້ຮັບຜິດຊອບການປົກຄອງບ້ານເມືອງ ແລະ ບັນດາຜູ້ຕາງໜ້າປະຊາຊົນ ໄດ້ມາຖວາຍຄວາມຈົ່ງຮັກພັກດີ ຕໍ່ພຣະອົງຄ໌. ແມ່ນຄນະຣັຖບານ, ສະມາຊິກ ສະພາຜູ້ແທນຣາຊດອນ, ສະມາສິກ ສະພາຣາຊມົນຕຣີ, ຂ້າຣາຊການ, ທະຫານ, ຕຳຣວຈ ຊັ້ນຜູ້ໃຫຍ່ ແລະ ປະຊາຊົນຜູ້ອາວຸໂສ ທີ່ໄດ້ເຂົ້າໄປໃນພຣະຣາຊວັງ ຫຼວງພຣະບາງ ເພື່ອຖວາຍພຣະຣາຊບາສີຫຼວງນີ້.

ໃນພິທີນີ້ ຜູ້ກ່າວກ້ານຊ່ວາຍ ຈະຕ້ອງປະກາດເຖິງເຂດນ້ຳແດນດິນ ຂອງປະເທດຊາດລາວເຮົາ ທັງສີ່ທິດ ຢ່າງຄົບຖ້ວນ ບໍ່ໃຫ້ເຫຼືອຫຍັງ ອັນເປັນສົມບັດອັນລ້ຳຄ່າ ຂອງປະຊາຊົນລາວທຸກໆເຜົ່າ ພ້ອມທັງເປັນພື້ນຖານຂອງຄວາມເປັນຊາດລາວ ພາຍໃຕ້ຮົ່ມໂພຮົ່ມໄຊ ຂອງພຣະບາດສົມເດັດພຣະເຈົ້າມະຫາຊີວິດລາວ ອົງຄ໌ປະມຸກຂອງຊາດ.

ໃນສມັຍໂບຮານ ປະຊາຊົນທີ່ເຂົ້າມາບາສີຫຼວງນັ້ນ ແມ່ນປະກອບໂດຍຫຼາຍໆເຜົ່າ ໂດຍສະເພາະແມ່ນເຜົ່າຂະມຸ ຊຶ່ງເປັນເຜົ່າທ້ອງຖິ່ນມາກ່ອນເຜົ່າອື່ນໆ ລາວເຮົາຈຶ່ງໄດ້ນັບຖືເອົາເປັນອ້າຍ.
- ພຣະອົງຄ໌ຖາມວ່າ : "ອ້າຍມາຫຍັງ ?"
- ຫົວໜ້າເຜົ່າຂະມຸຕອບວ່າ : "ອ້າຍມາບາສີຖວາຍນ້ອງ ອ້າຍເອົາໝາກໝັ້ນໝາກຍືນ ມາຖວາຍນ້ອງ ໃນຖານະນ້ອງເປັນຜູ້ຖືກມອບໝາຍ ໃຫ້ປົກຄອງບ້ານເມືອງ ຫ້ອນໂຮມເອົາ ເຜົ່າພວກອ້າຍ ແລະ ເຜົ່າອື່ນໆ ເຂົ້າມາຢູ່ໃນວົງສາຄະນະຍາດອັນດຽວກັນ ຮັກແພງກັນ ຢູ່ກິນນຳກັນ ໃນສັນຕິພາບ ສ້າງຕັ້ງ ແລະ ອານຸຮັກຮັກສາ ຊາດລາວ ໃຫ້ຖາວອນ. ອ້າຍຈຶ່ງຂໍອວຍໄຊໃຫ້ພອນນ້ອງ ຈົ່ງໃຫ້ໝັ້ນໃຫ້ຍືນ ໃຫ້ມີສຸຂພາບແຂງແຮງ ເພື່ອຄວາມສຳເຣັດໃນໜ້າທີ່ຂອງນ້ອງ".

ອັນນີ້ເປັນຄວາມອະທິບາຍຫຍໍ້ໆ ກ່ຽວກັບພຣະຣາຊພິທີບາສີຫຼວງ.
ປະເພນີລາວທຸກໆອັນ ແມ່ນມີຄວາມໝາຍອັນໜ້າສົນໃຈທີ່ສຸດ.
ຂ້າພະເຈົ້າຂໍສັນລະເສີນ ແລະ ຂໍເຊີນຊວນ ຊາວໜຸ່ມລາວໃຫ້ຄົ້ນຄ້ວາເບິ່ງ ແລະ ພວກທ່ານຈະຮູ້ສຶກມີກຽດ ທີ່ເຊື້ອຊາດຂອງພວກທ່ານ ເປັນເຊື້ອຊາດອັນສົມບູນ ມີສິລປະ ວັທນະທັມ ປະເພນີ ເປັນຂອງລາວເຮົາເອງ. ລາວທຸກໆຄົນ ມີໜ້າທີ່ ອານຸຮັກຮັກສາເອົາໄວ້ ພ້ອມກັບ ຕ້ອງຮັກສາ ຄວາມຄົງຢູ່ຂອງປະເທດຊາດລາວ.

ຂ້າພະເຈົ້າ ຂໍຖືໂອກາດນີ້ ຮຽກຮ້ອງມາຍັງຜູ້ນຳລາວ ທຸກໆທ່ານ ຂໍໃຫ້ຊ່ວຍກັນ ເອົາໃຈໃສ່ ຣະມັດຣະວັງຕຶກຕອງເຖິງອານາຄົດ ໃຫ້ຖ້ວນທີ່ ໃນການຮັກສາເຂດນ້ຳແດນດິນອັນຄົບຖ້ວນ ຂອງປະຊາຊົນລາວ ໃຫ້ເປັນຂອງປະຊາຊົນລາວ ຕລອດໄປ.

ທ້າຍສຸດນີ້ ໃນໂອກາດວັນສັງກາດສັງຂານຂຶ້ນປີໃໝ່ ປ່ຽນຣາສີມາເປັນປີຊວດ ພຸທທະສັກກະຣາດ ໒໕໖໑ ຂ້າພະເຈົ້າ ຂໍປະສິດປາສາທພອນປີໃໝ່ ໃຫ້ແດ່ພວກທ່ານທັງຫຼາຍ ຈົ່ງປະສົບແຕ່ ຄວາມຢູ່ເຢັນເປັນສຸກ ຄວາມທຸກຢ່າໄດ້ ຄວາມໄຂ້ຢ່າມີ ຢ່າໃຫ້ມີເສິກທາງເໜືອ ຢ່າໃຫ້ມີເສືອທາງໃຕ້ ຂໍໃຫ້ໄດ້ພົບແຕ່ ຄວາມສງົບສຸກ ເຂົ້ານາຕາກ້າ ພືດພັນທັນຍາຫານ ອຸດົມສົມບູນ ຄ້ຳພຣະພຸທສາສນາ ໃຫ້ຈະເຣີນຮຸ່ງເຮືອງ ຕລອດໄປດ້ວຍ ເທີ້ນ.

ອາຍຸ ວັນໂນ ສຸຂັງ ພະລັງ.